# ການສື່ສານແລະຄວາມຮູ້ທົ່ວໄປ (3-5 ປີ)

ການສື່ສານພົວພັນທັງການປາກເວົ້າແລະຟັງ. ມັນແມ່ນຄວາມສຳນີສຳນານເພື່ອຈະຊີ້ແຈງຄວາມຕ້ອງການຢ່າງແຈ່ມແຈ້ງແລະເຂົ້າໃຈຄົນອື່ນໆ.

ຄວາມຮູ້ທົ່ວໄປແມ່ນການສົນໃຈກັບໂລກພາຍນອກ.

ເດັກນ້ອຍທີ່ປາກເວົ້າໄດ້ດີແລະທີ່ມີຄວາມຢາກຮຽນຮູ້ກ່ຽວກັບໂລກອ້ອມຂ້າງພວກຂະເຈົ້າແມ່ນເດັກນ້ອຍທີ່ຕຽມພ້ອມແລ້ວທີ່ຈະໄດ້ດີ - ທັງໃນໂຮງຮຽນແລະຕລອດຊີວິດ.

## ເດັກນ້ອຍກ່ອນການເຂົ້າໂຮງຮຽນທີ່ມີການສື່ສານດີແລະຄວາມສຳນານໃນດ້ານຄວາມຮູ້ທົ່ວໄປ:

- ເຫຼົ່າເຣື້ອງ
- ໃຊ້ການນຶກຄິດຫຼີ້ນ (ທຳທ່າເປັນໂຈນທະເລ, ຫຼືສົມໝຸດວ່າບູອກອັນນຶ່ງແມ່ນຕຶກຫຼັງນຶ່ງ)
- ເຂົ້າໃຈເມື່ອພວກຂະເຈົ້າຂໍເຮັດບາງສິ່ງບາງຢ່າງ
- ສື່ສານຄວາມຕ້ອງການຂອງພວກຂະເຈົ້າເຖິງຜູ້ເຕັມກະສຽນໂດຍວິທີທີ່ແມ່ນສິ່ງງ່າຍດາຍທີ່ຈະເຂົ້າໃຈ

## ວິທີເພື່ອຊ່ວຍຊ່ວຍເດັກນ້ອຍພັທນາຄວາມສຳນີສຳນານການສື່ສານແລະຄວາມຮູ້ທົ່ວໄປ:

- ຟັງລູກຂອງທ່ານໂດຍບໍ່ຕັດຈັ່ງວະ
- ຖາມລູກຂອງທ່ານກ່ຽວກັບມື້ຂອງພວກຂະເຈົ້າ - ຖາມຄຳຖາມແບບເປີດກ້ວາງ, ເຊັ່ນວ່າ "ເຈົ້າເຮັດຫຍັງຢູ່ນອກ?" ແທນທີ່ຈະຖາມວ່າ "ມື້ນີ້ມ່ວນບໍ່?" ເພື່ອວ່າລູກຂອງທ່ານຈະສາມາດເວົ້າຫຼາຍກ່ວາ "Yes" ຫຼື "No".
- ປ່ອຍໃຫ້ລູກຂອງທ່ານຖາມຄຳຖາມຫຼາຍໆ - ຖ້າຫາກລູກຖາມຄຳຖາມຫຼາຍໆ ມັນໝາຍຄວາມວ່າພວກຂະເຈົ້າຢາກຮູ້ກ່ຽວກັບໂລກນີ້. ພວກຂະເຈົ້າສອບຖາມທ່ານເພາະພວກຂະເຈົ້າເຊື່ອໃຈວ່າທ່ານຈະບອກໃຫ້ພວກຂະເຈົ້າຮູ້ສິ່ງທີ່ພວກຂະ
  ເຈົ້າຢາກຮູ້.
- ລົມກ່ຽວກັບຄວາມຮູ້ສຶກຕ່າງໆ - "ແມ່ນຫັຍງເຮັດໃຫ້ເຈົ້າໂສກເສົ້າ?" ເມື່ອອ່ານປຶ້ມນຳກັນ, ລົມກ່ຽວກັບບຸກຄົນນຶ່ງຫຼືຕົວສະແດງໃນປຶ້ມນັ້ນອາດມີຄວາມຮູ້ສຶກແບບໃດແລະເຂົາອາດຕ້ອງການຫຍັງ.
- ອ່ານປຶ້ມກັບລູກຂອງທ່ານແລະລົມກ່ຽວກັບປຶ້ມທີ່ທ່ານອ່ານນັ້ນ. ພະຍາຍາມກ່ຽວພັນຣະຫວ່າງຄວາມປະສົບການ, ແນວຄິດແລະປຶ້ມຕ່າງໆ, ຕົວຢ່າງ: ພວກເຂົາກຳລັງກິນ ເວຈີໄມຕ໌, ຂ້ອຍປະຫຼາດໃຈວ່າພວກເຂົາຫາຍໂຕໄປດັ່ງໃນປຶ້ມບໍ່, Possum Magic.
- ຮ້ອງເພງນຳກັນ, ວາງທຳນອງແລະເວົ້າຕະລົກໂງ່ໆ.
- ຫຼີ້ນເກມ ທຳທ່າແລະນິກັຜນ - ບາງທີໃຊ້ການນຸ່ງເຄື່ອງເອ້ຫຼືວັດຖຸອື່ນໆທີ່ມີໃນບ້ານເຮືອນ. ປ່ອຍໃຫ້ພວກຂະເຈົ້າຫຼິ້ນເຄື່ອງຫຼີ້ນຫຼາຍຢ່າງແລະທີ່ມີວັດສະດຸແຕກຕ່າງກັນ (ໝາກຕຸ້ມ, ດິນດາກ, ໃບໄມ້, ອັນໜີບເຄື່ອງ, ບູອກ)
- ໃຫ້ກຳລັງໃຈລູກຂອງທ່ານ -ການຍ້ອງຍໍອັນຈິງດີສຳຫຼັບຄວາມພະຍາຍາມຂອງລູກຂອງທ່ານເປັນການຊ່ວຍຊ່ວຍພວກຂະເຈົ້າຮຽນຮູ້

ເພື່ອສື່ສານ. ທົ່ວໃສ່ຄວາມຜິດພາດຂອງພວກຂະເຈົ້າຈະບໍ່ເປັນການໃຫ້ກຳລັງໃຈແກ່ພວກຂະເຈົ້າຈະພະຍາຍາມ.

- ໃຫ້ຮູ້ເຖິງສິ່ງທີ່ສຳຄັນສຳຫຼັບລູກຂອງທ່ານ - ຖາມກ່ຽວກັບເພື່ອນໆຂອງພວກຂະເຈົ້າ, ເຄື່ອງຫຼິ້ນທີ່ມັກສຸດ, ຮູບເງົາຫຼືປຶ້ມຕ່າງໆ.
- ໃຫ້ການປະສົບການ - ໄປຊື້ເຄື່ອງ, ໄປຫໍສະມຸດຫຼືສວນ ພາກກ໌ ນຳກັນ, ຫຼືແຕ້ມຮູບແລະໃສ່ສີນຳກັນແມ່ນໂອກາດເພື່ອພັທນາຄວາມສຳນິສຳນານໃນການສື່ສານແລະຄວາມຮູ້ທົ່ວໄປ.
- ກິນເຂົ້າຄາບຄ່ຳນຳກັນເປັນຄອບຄົວ - ນີ້ເປັນເວລາອັນສຳຄັນສຳຫຼັບສະມາຊິກຄອບຄົວທີ່ຈະລົມກັນກ່ຽວກັບມື້ຂອງພວກຂະເຈົ້າ. ເອົາລູກຂອງທ່ານເຂົ້າຮ່ວມການສົນທະນາກັນກັບຜູ້ເຕັມກະສຽນ.
- ວາງຂອບເຂດໃສ່ທໍຣະພາບ, ຄອມພິວເຕີແລະວີດີໂອເກມ - ນີ້ຈະໃຫ້ເວລາຫຼາຍຕື່ມແກ່ລູກຂອງທ່ານສຳຫຼັບການປະສົບການອັນແທ້ຈິງເພື່ອໂອ້ລົມກັນ. ການໃຊ້ຄອມພິວເຕີ, ເບິ່ງທໍຣະພາບຫຼືດີວີດີ, ກະທັ້ງອັນໃຫ້ການຮຽນຮູ້, ແມ່ນບໍ່ໄດ້ຊິດຊ່ວຍລູກຂອງ
  ທ່ານຮຽນຮູ້ສື່ສານກັນ.
- ເດັກຮຽນຮູ້ສິ່ງຕ່າງໆຈາກຄົນຕ່າງໆ - ດ້ວຍເຫດນີ້ ໃຫ້ໄປຢ້ຽມຢາມເພື່ອນມິດແລະພົບປະກັບຄອບຄົວພໍ່ແມ່ອື່ນໆ, ໄປຫາ ເພຼກຼຸບ.
- ມັນໃຊ້ໝູ່ບ້ານນຶ່ງເພື່ອລ້ຽງລູກຂຶ້ນມາ - ດ້ວຍໃຫ້ໃຊ້ກາຍຊ່ວຍເຫຼືອຕ່າງໃນຊຸມຊົນຂອງທ່ານ, ເຊັ່ນເວລານິທານຢູ່ທີ່ຫໍສມຸດຂອງທ່ານ, ສວນພາກກ໌, ຫໍວັດຖຸໂບຮານ, ສະລອຍນ້ຳ, ໂຮງຮຽນອະນຸບານແລະອື່ນໆ.
- ທ່ານບໍ່ຕ້ອງຈະຮັ່ງມີສຳຫຼັບທີ່ລູກຂອງທ່ານຈະມີແວດລ້ອມການຮຽນທີ່ອູດົມສົມບຸນ. ເຄື່ອງຫຼິ້ນແລະປຶ້ມສາມາດຖືກຢືມໄດ້ຈາກຫໍສະມຸດຕ່າງໆ. ເລື້ອຍໆໄປມີລາຍການທີ່ບໍ່ເກັບຄ່າຢູ່ໃນຊຸມຊົນຂອງທ່ານ - ໃຫ້ອ່ານໜັງສືພິມທ້ອງຖິ່ນເພື່ອຈະຮຽນຮູ້.
- ລົມກັນກັບລູກຂອງທ່ານເປັນພາສາທີ່ທ່ານສະດວກສະບາຍໃຈນຳ. ນີ້ຈະເຮັດໃຫ້ແນ່ວ່າພວກຂະເຈົ້າຈະຮຽນຮູ້ພາສາອັນນຶ່ງໄດ້ດີ. ໃຫ້ຊິດຊ່ວຍລູກຂອງທ່ານເລີ້ມຮຽນພາສາອັງກິດກ່ອນທີ່ພວກຂະເຈົ້າຈະເລີ້ມເຂົ້າໂຮງຮຽນໂດຍການຈົດຊື່
  ພວກຂະເຈົ້ານຳໂຮງຮຽນ preschool ຫຼື ບ່ອນດູແລເດັກ child care.
- ໃຫ້ຊົມຊື່ນເວລາອັນຕື່ນເຕັ້ນນີ້ກັບລູກຂອງທ່ານ.



